# ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງໃນເຂດເທດສະບານ ນະຄອນປາກເຊ ແຂວງຈຳປາສັກ

**ສຸດສະຫງ່າ ສີສຸວົງ[1], ແສງສຸລິຍາ ຈັນທະນາຄອນ[2], ວອນວະໄລ ອິນບຸນມີ[3], ໜູໄກ ສີຫາເທບ[4]**

*ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ ມີຈຸດປະສົງເພື່ອ: 1) ສຶກສາກ່ຽວກັບສະພາບການຈັດຕັ້ງປະຕິບັດ ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈຳປາສັກ, 2) ປຽບທຽບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ ໂດຍຈຳແນກຕາມປັດໄຈສ່ວນບຸກຄົນ, ໂດຍໃຊ້ແບບສອບຖາມ ເປັນເຄື່ອງມືໃນການສຶກສາ. ການສຶກສາຄັ້ງນີ້ ແມ່ນໄດ້ນຳໃຊ້ຂໍ້ມູນປະຖົມພູມ (Primary Data) ຫຼື ຂໍ້ມູນທີ່ໄດ້ ຈາກການເກັບແບບສອບຖາມ ນຳກຸ່ມຕົວຢ່າງຈຳນວນ 364 ສະບັບ ແລະ ໄດ້ນຳເອົາຂໍ້ມູນດັ່ງກ່າວມາວິເຄາະ ເພື່ອອະທິບາຍຄ່າຄວາມຖີ່, ອັດຕາສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການຫາຄວາມສຳພັນຂອງຕົວປ່ຽນ ໂດຍໃຊ້ໂປຣແກຣມສຳເລັດຮູບທາງສະຖິຕິ.

ຜົນການສຶກສາຄົ້ນຄວ້າ ລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ ໂດຍພາບລວມ ຢູ່ໃນລະດັບປານກາງ ($\bar{X}$==3.44), ເມື່ອພິຈາລະນາໃນແຕ່ລະດ້ານ ພົບວ່າ: ດ້ານການມີສ່ວນຮ່ວມໃນການຕັດສິນໃຈ ($\bar{X}$==3.45), ດ້ານການມີສ່ວນຮ່ວມໃນການດຳເນີນງານ ($\bar{X}$=3.45), ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ($\bar{X}$==3.44) ແລະ ດ້ານການມີສ່ວນຮ່ວມໃນການປະເມີນຜົນ ($\bar{X}$==3.44) ທຸກດ້ານຢູ່ໃນລະດັບປານກາງ.

ຜົນການປຽບທຽບການມີສ່ວນຮ່ວມ ຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະ ຄອນປາກເຊ ແຂວງຈຳປາສັກ ໂດຍຈຳແນກຕາມປັດໄຈສ່ວນບຸກຄົນ ພົບວ່າ: ປະຊາຊົນທີ່ມີເພດ, ອາຍຸ, ລະດັບການສຶກສາ, ອາຊີບ ແລະ ລາຍໄດ້ ຕ່າງກັນ ການມີສ່ວນຮ່ວມໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ ບໍ່ແຕກຕ່າງກັນ. ດັ່ງນັ້ນ, ຈຶ່ງປະຕິເສດສົມມຸດຖານ.

**ຄຳສັບສຳຄັນ:** ການມີສ່ວນຮ່ວມໃນການຕັດສິນໃຈ, ການມີສ່ວນຮ່ວມໃນການດຳເນີນງານ, ການມີສ່ວນ ຮ່ວມໃນການຮັບຜົນປະໂຫຍດ, ການມີສ່ວນຮ່ວມໃນການປະເມີນຜົນ.

---

[1] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມລ: Southsanga@gmail.com*

[2] *ແສງສຸລິຍາ ຈັນທະນາຄອນ, ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລຈຳປາສັກ, ອີເມລ: ctnksengsouliya@gmail.com*

[3] *ວອນວະໄລ ອິນບຸນມີ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມລ: vonevalay@gmail.com*

[4] *ໜູໄກ ສີຫາເທບ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມລ: nou999sihathep@gmail.com*

# LOCAL VILLAGERS' PARTICIPATION FOR URBAN DEVELOPMENT IN PAKSE CITY, CHAMPASAK PROVINCE

**Soudsanga SISOUVONG[1], Sengsouliya CHANTHANAKHONE[2], Vonevalay INBOUNMY[3], Noukay SIHATHEP[4]**

*The Faculty of Economics and Management, Champasak University, Lao PDR*

## Abstract

This research aims to: 1) study the participation of local villager's in urban development at Pakse city, Champasak province, 2) compare the participation of local villager's for urban development in Pakse city, Champasak province classified by personal factors, using a questionnaire as a tool in the study. The research collected data with questionnaires from 364 samples from the people who were the local villagers' in Pakse City Champasak province. Data were analyzed by frequency percentage, mean, standard deviation, t-test and f-test using One-Way analysis of variance, ANOVA. When it is found that there are differences, it will compare the differences in pairs. The result of this study found that:

The level of local villagers' participation in Pakse city Champasak province. By overall was at moderate level )$\overline{X}$(3.44=. When considering each aspect, it was found that the participation in decision making was at $\overline{X}$=3.45, participation in the operation was at $\overline{X}$=3.45, participation in receiving shared benefits was at $\overline{X}$=3.45 and participation in the evaluation $\overline{X}$=3.45.

The results of the comparison of villagers' participation in urban development at Pakse city, Champasak province were found that: villagers' with different gender, age, educational levels, occupations and income was not at different level. Therefore, rejecting the settle research hypothesis.

**Key words:** Participation in decision making, participation in the operation, participation in receiving shared benefits and participation in the evaluation.

[1] *Faculty of Economics and Management,CU, Email: Southsanga@gmail.com*
[2] *Sciencetific and Academic Office, CU, Email: ctnksengsouliya@gmail.com*
[3] *Faculty of Economics and Management,CU, Email: vonevalay@gmail.com*
[4] *Faculty of Economics and Management,CU, Email: nou999sihathep@gmail.com*

## I. ພາກສະເໜີ

ໃນທົດສະວັດທີ່ຜ່ານມາ ການຫັນເປັນຕົວເມືອງຢູ່ ສປປ ລາວ ໄດ້ເກີດຂຶ້ນຢ່າງໄວວາ ເຮັດໃຫ້ອັດຕາການເພີ່ມຂຶ້ນຂອງປະຊາກອນ ແລະ ການຂະຫຍາຍເຂດຕົວເມືອງ ແມ່ນກວມເອົາເປີເຊັນສູງທີ່ສຸດ ທຽບໃສ່ບັນດາປະເທດໃນພາກພື້ນ ເຊິ່ງ ສປປ ລາວ ຢູ່ໃນລະດັບ 8,6% ແລະ 7,3% ສໍາລັບພາກພື້ນອາຊີຕາເວັນອອກ (ບົດລາຍງານຂອງທະນາ ຄານໂລກ, 2015), ເຖິງແນວໃດກໍຕາມ ບັນດາຕົວເມືອງໃຫຍ່ໃນ ສປປ ລາວ ກໍາລັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ການເພີ່ມຂຶ້ນຂອງປະລິມານສິ່ງເສດເຫລືອ (ຂີ້ເຫຍື້ອ), ການບໍລິການສາທາລະນະຂັ້ນພື້ນຖານ ຍັງບໍ່ທັນພຽງພໍ, ມົນລະພິດ, ການຂະຫຍາຍຕົວເມືອງ ບໍ່ເປັນໄປຕາມແຜນ ເຊິ່ງກໍ່ໃຫ້ເກີດຄວາມສ່ຽງທາງດ້ານສຸຂະພາບ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ເຊັ່ນດຽວກັນກັບການເສື່ອມໂຊມ ຂອງສະພາບແວດລ້ອມໃນຕົວເມືອງ ທີ່ຕາມມາ. ສະນັ້ນ, ວຽກງານວາງແຜນພັດທະນາຕົວເມືອງ ເພື່ອການຄຸ້ມຄອງ ແລະ ຮັກສາຄວາມສະອາດຈົບງາມໃນຕົວເມືອງ ຈຶ່ງມີຄວາມຈໍາເປັນ ແລະ ສໍາຄັນຫລາຍໃນການພັດ ທະນາປະເທດຊາດໃນໄລຍະໃໝ່ (ນະຄອນປາກເຊ, ແຜນຈັດຕັ້ງປະຕິບັດຕົວເມືອງສີຂຽວ 2022-2030).

ນະຄອນປາກເຊ ແມ່ນໜຶ່ງໃນຕົວເມືອງໃຫຍ່ຂອງລາວ ທີ່ຕັ້ງຢູ່ທາງພາກໃຕ້ຂອງປະເທດ ທີ່ມີລະດັບການພັດ ທະນາເສດຖະກິດ-ສັງຄົມ ຢ່າງວ່ອງໄວ ໂດຍສະເພາະດ້ານການພັດທະນາຕົວເມືອງ, ນະຄອນປາກເຊ ມີຈຸດພິເສດທາງດ້ານທີ່ຕັ້ງ ທີ່ແຕກຕ່າງຈາກຕົວເມືອງອື່ນ ເຊິ່ງຕັ້ງຢູ່ຈຸດປາກ ນໍ້າເຊໂດນໄຫຼປ່ອງໃສ່ແມ່ນໍ້າຂອງ (ເປັນທີ່ມາຂອງຊື່ ນະ ຄອນປາກເຊ), ທິດເໜືອຕິດກັບເມືອງຊະນະສົມບູນ ຍາວ 14,3 ກິໂລແມັດ, ທິດຕາເວັນອອກ ແລະ ທິດໃຕ້ຕິດກັບເມືອງບາຈຽງຈະເລີນສຸກ ຍາວ 15 ກິໂລແມັດ, ທິດຕາເວັນ ຕົກຕິດກັບແມ່ນໍ້າຂອງ ເປັນຊາຍແດນເຊື່ອມຕໍ່ກັບເມືອງໂພນທອງ ຍາວ 17,7 ກິໂລແມັດ; ມີເນື້ອທີ່ທັງໝົດ 12.508 ເຮັກຕາ, ປະກອບມີ 42 ບ້ ມີປະຊາກອນທັງໝົດ 85.066 ຄົນ, ຍິງ 44.045 ຄົນ, ມີ 15.181 ຄົວເຮືອນ, ຄວາມໜາແໜ້ນຂອງປະຊາກອນສະເລ່ຍ 680 ຄົນ/ກິໂລຕາແມັດ (ສະເພາະຢູ່ໃນເຂດເທດສະບານສະເລ່ຍ 2.100 ຄົນ/ກິໂລຕາແມັດ); ປະຊາຊົນສ່ວນໃຫຍ່ປະກອບອາຊີບຄ້າຂາຍ, ບໍລິການ, ກໍາມະກອນ , ຊ່າງຫັດຖະກໍາ ກວມ 63,5%, ອາຊີບພະນັກງານລັດຖະກອນ ກວມ 28% ແລະ ທໍາການຜະລິດກະສິກໍາ ກວມ 8,5%. ເປັນຕົວເມືອງທີ່ມີເສັ້ນທາງຜ່ານເຂົ້າ-ອອກ ແລະ ເຊື່ອມຈອດກັບບັນດາແຂວງທີ່ຢູ່ທາງພາກໃຕ້ ຄື: ແຂວງສາ ລະວັນ, ແຂວງເຊກອງ, ແຂວງອັດຕະປື ແລະ ປະເທດໃນອະນຸພາກພື້ນ (ໄທ, ກໍາປູເຈຍ), ພ້ອມກັນນັ້ນ ກໍເປັນເມືອງເທດສະບານຂອງແຂວງຈໍາປາສັກ ຈຶ່ງໄດ້ກາຍເປັນສະຖານ ທີ່ຕັ້ງ ຂອງສໍານັກງານ, ອົງການລັດຂັ້ນແຂວງ ກໍຄືອົງການທຽບເທົ່າຂັ້ນສູນກາງ ປະຈໍາພາກໃຕ້ ຕະຫລອດຮອດບໍລິ ສັດ, ຫ້າງຮ້ານ ແລະ ຫົວໜ່ວຍທຸລະກິດຕ່າງໆ ທີ່ດໍາເນີນທຸລະກິດຢູ່ເຂດພາກໃຕ້ອີກດ້ວຍ. ຍ້ອນມີຈຸດພິເສດ, ເງື່ອນ ໄຂ ແລະ ທ່າແຮງ ທີ່ກ່າວມານັ້ນ ຈຶ່ງສາມາດເວົ້າໄດ້ວ່າ: ນະຄອນປາກເຊ ເປັນຈຸດສູນກາງທາງດ້ານເສດຖະກິດ, ວັດທະ ນະທໍາ-ສັງຄົມ, ການຄ້າ, ການລົງທຶນ, ການບໍລິການ, ການ ທ່ອງທ່ຽວ ຂອງພາກໃຕ້ ສປປ ລາວ (ນະຄອນປາກເຊ, ແຜນພັດທະນາເສດຖະກິດ-ສັງຄົມ ປີ 2021). ຄຽງຄູ່ກັນນັ້ນ, ຍຸດທະສາດດ້ານການພັດທະນາຕົວເມືອງ ຂອງແຂວງ ຈໍາປາສັກ ຍັງໄດ້ເລັງໃສ່: “ສ້າງນະຄອນປາກເຊ ເປັນໃຈກາງທາງດ້ານເສດຖະກິດ, ການຄ້າ ແລະ ການບໍລິການຜ່ານຢ່າງແຂງແຮງ, ຊຸກຍູ້ຂະບວນການສ້າງເມືອງ ໃຫ້ມີສະພາບແວດລ້ອມໜ້າຢູ່ ແລະ ເຂັ້ມ ແຂງຮອບດ້ານ” ຕາມທິດສາມສ້າງ, ປະສານສົມທົບກັບແນວຄິດ 8 ສໍ (ແຂວງຈໍາປາສັກ, ມະຕິກອງປະຊຸມໃຫຍ່ ໄລຍະ 2021-2025).

ຍ້ອນເຫັນໄດ້ຄວາມໝາຍຄວາມສໍາຄັນຂອງວຽກງານພັດທະນາຕົວເມືອງ, ພັກ ແລະ

ລັດຖະບານແຫ່ງ ສປປ ລາວ ຈຶ່ງໄດ້ພິຈາລະນາ ອະນຸມັດ ຍົກລະດັບການປົກຄອງຂອງນະຄອນປາກ ເຊ ຈາກເມືອງປາກເຊ ກາຍເປັນ ນະຄອນປາກເຊ ຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ໃນປີ 2018 ພ້ອມກັນກັບ 2 ຕົວເມືອງໃຫຍ່ ຄື: ນະຄອນ ໄກສອນພົມວິຫານ ແຂວງສະຫວັນນະເຂດ ແລະ ນະຄອນຫຼວງພະບາງ ແຂວງຫຼວງພະບາງ (ນາຍົກລັດຖະມົນຕີ, ດຳລັດ 2018), ຍິ່ງເຮັດໃຫ້ ນະຄອນປາກເຊ ມີລະດັບການພັດທະ ນາຕົວເມືອງ ສູງຂຶ້ນກວ່າເກົ່າ, ໃນຂະນະດຽວກັນ ສະພາບແວດ ລ້ອມໃນຕົວເມືອງ ນະຄອນປາກເຊ ກໍກຳລັງປະເຊີນ ກັບບັນຫາ ແລະ ສິ່ງທ້າທາຍຕ່າງໆ ທີ່ຕິດພັນກັບ ການຂະ ຫຍາຍຕົວເມືອງ ໂດຍສະເພາະແມ່ນບັນຫາ ຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ທີ່ມີທ່າອ່ຽງເພີ່ມ ຂຶ້ນ ສະແດງອອກໃນປະລິມານຂີ້ເຫຍື້ອ ໃນປີ 2022 ມີຈຳນວນ 24.085 ໂຕນ, ທຽບໃສ່ປີ 2021 ເພີ່ມຂຶ້ນ 30,7% (ຫ້ອງການຄຸ້ມຄອງ ແລະ ບໍລິການ ສາທາລະນະ ນະຄອນປາກເຊ, ບົດສະຫຼຸບປີ 2022), ນອກຈາກນັ້ນ ຍັງມີບັນຫານ້ຳເປື້ອນ, ບັນຫາມົນລະພິດ, ການຈະລາຈອນໜາແໜ້ນ, ນັບ ທັງຄວາມບອບບາງຈາກຜົນກະທົບຂອງການປ່ຽນ ແປ່ງດິນຟ້າອາກາດ ເຮັດໃຫ້ມີສະພາບນ້ຳຖ້ວມ, ນ້ຳ ອັ່ງ, ນ້ຳຂັງ ແລະ ບັນຫາອື່ນໆ ທີ່ສົ່ງຜົນກະທົບໂດຍ ກົງ ຕໍ່ກັບວຽກງານພັດທະນາຕົວເມືອງ ເຮັດໃຫ້ ສະພາບແວດລ້ອມຂອງຕົວເມືອງ ນະຄອນປາກເຊ ບໍ່ທັນເປັນລະບຽບຮຽບຮ້ອຍ ແລະ ບໍ່ສະອາດງາມ ຕາ. ນອກ ຈາກນັ້ນ ຍັງພົບເຫັນບັນຫາການລ້ຽງສັດ ແບບຊະຊາຍຂອງປະຊາຊົນຢູ່ໃນເຂດຕົວເມືອງ, ຕາມເສັ້ນທາງຫຼວງ ແລະ ສະຖານທີ່ສາທາລະນະ ຕ່າງໆ ເປັນຕົ້ນ: ງົວ, ຄວາຍ, ແບ້,...ເຊິ່ງໄດ້ສ້າງ ຄວາມເປິເປື້ອນ, ຄວາມບໍ່ເປັນລະບຽບຮຽບຮ້ອຍ, ບໍ່ຈິບງາມໃຫ້ແກ່ຕົວເມືອງ ແລະ ມີຄວາມສ່ຽງຕໍ່ ການເກີດອຸບັດຕິເຫດ.

ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈຢາກຄົ້ນຄວ້າ, ວິໄຈ ກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນ ໃນ ການພັດທະ ນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈຳປາສັກ, ເພື່ອເຮັດໃຫ້ວຽກ ງານພັດທະນາຕົວເມືອງ ກໍຄື ການຄຸ້ມຄອງຄວາມ ເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດ ຈິບງາມໃນຕົວເມືອງ ໃຫ້ມີປະສິດທິຜົນ ແລະ ມີ ຄວາມຍືນຍົງ.

## 2. ຈຸດປະສົງ

2.1 ສຶກສາລະດັບການມີສ່ວນຮ່ວມ ຂອງ ປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດ ເທດສະບານ ນະຄອນປາກເຊ ແຂວງຈຳປາສັກ.

2.2 ປຽບທຽບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈຳປາສັກ ໂດຍຈຳແນກຕາມ ປັດໄຈສ່ວນບຸກຄົນ.

## 3. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນນຳໃຊ້ຂໍ້ມູນປະຖົມ ພູມ ໂດຍ ນຳໃຊ້ແບບສອບຖາມເປັນເຄື່ອງມື ໃນ ການລົງສຳຫຼວດ-ເກັບກຳຂໍ້ມູນກັບຄອບຄົວ ປະຊາຊົນ ໃນຈຳນວນ 03 ບ້ານ ຄື: ບ້ານໂພນໄຊ, ບ້ານທ່າຫຼວງ ແລະ ບ້ານປາກເຊ ນະ ຄອນປາກເຊ ແຂວງຈຳປາສັກ; ການຄັດເລືອກກຸ່ມເປົ້າໝາຍໃນ ການສຶກສາ ແມ່ນນຳໃຊ້ວິທີການສຸ່ມຕົວຢ່າງແບບ ແບ່ງຊັ້ນ (Stratified Random Sampling) ເຊິ່ງ ມີຈຳນວນປະຊາກອນທັງໝົດ 4.062 ຄອບຄົວ ແລະ ກຸ່ມຕົວ ຢ່າງທັງໝົດ 364 ຕົວຢ່າງ; ການ ວິເຄາະຂໍ້ມູນ ດ້ວຍໂປຣແກຣມສຳເລັດຮູບ ສຳລັບ ການສຶກສາຄົ້ນຄວ້າ ໂດຍນຳໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອອະທິ ບາຍ ລັກສະນະທົ່ວໄປ ຂອງກຸ່ມຕົວຢ່າງ, ພັນລະນາ ລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນການ ພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນ ປາກເຊ ແຂວງຈຳປາສັກ, ສະຖິຕິທີ່ນຳໃຊ້ ແມ່ນຄ່າ ຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean: $\bar{X}$) ແລະ ຄ່າ ຜົນປ່ຽນມາດຕະຖານ (Standard Deviation: SD) ແລະ ວິເຄາະດ້ວຍການທົດສອບຄ່າ (T-test)

ໃນກໍລະນີຕົວປ່ຽນອິດສະຫຼະມີສອງກຸ່ມ ແລະ ການທົດສອບຄ່າ (F-test) ໂດຍນໍາໃຊ້ວິທີການວິເຄາະຄ່າຜັນປ່ຽນທາງດຽວ (One Way ANOVA), ໃນກໍລະນີຕົວປ່ຽນອິດສະຫຼະ ສາມກຸ່ມຂຶ້ນໄປ ເມື່ອເຫັນວ່າມີຄວາມແຕກຕ່າງກັນ ຈະໄດ້ມີການປຽບທຽບຄວາມແຕກຕ່າງ ຂອງຄ່າສະເລ່ຍເປັນຄູ່ດ້ວຍວິທີຄວາມແຕກຕ່າງທີ່ມີຄວາມສໍາຄັນໜ້ອຍທີ່ສຸດ (Least Significant Difference: LSD).

**4. ຜົນໄດ້ຮັບ**

ຜົນການວິເຄາະຂໍ້ມູນຕົວຈິງຈາກກຸ່ມຕົວຢ່າງ ພົບວ່າ ປະຊາຊົນໃນເຂດພື້ນທີ່ການສຶກສາ ມີສ່ວນຮ່ວມໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ໂດຍລວມຢູ່ໃນລະດັບປານກາງ, ເຊິ່ງປະຊາຊົນສ່ວນໃຫຍ່ເປັນເພດຊາຍ ກວມເອົາ 56,6 ສ່ວນຮ້ອຍ, ອາຍຸໃນລະຫວ່າງ 41-45 ປີ ກວມເອົາ 35,20 ສ່ວນຮ້ອຍ, ຮອງລົງມາແມ່ນອາຍຸລະຫວ່າງ 46-50 ປີ ກວມເອົາ 20,30 ສ່ວນຮ້ອຍ, ອາຍຸລະຫວ່າງ 36-40 ປີ ກວມເອົາ 19,50 ສ່ວນຮ້ອຍ, ອາຍຸລະຫວ່າງ 30-35 ປີ ກວມເອົາ 13,70 ສ່ວນຮ້ອຍ, ອາຍຸລະຫວ່າງ 51-55 ປີ ກວມເອົາ 5,20 ສ່ວນຮ້ອຍ, ອາຍຸລະຫວ່າງ 61-65 ປີ ກວມເອົາ 3 ສ່ວນຮ້ອຍ ແລະ ອາຍຸ 66 ປີຂຶ້ນໄປ ກວມເອົາ 0,50 ສ່ວນຮ້ອຍ; ລະດັບການສຶກສາຈົບຊັ້ນກາງ ກວມເອົາ 54,90 ສ່ວນຮ້ອຍ, ຮອງລົງມາແມ່ນຈົບມັດທະຍົມປາຍ ກວມເອົາ 24,70 ສ່ວນຮ້ອຍ, ຈົບມັດທະຍົມຕົ້ນ ກວມເອົາ 8,00 ສ່ວນຮ້ອຍ, ຈົບການສຶກສາຊັ້ນສູງ ກວມເອົາ 6,60ສ່ວນຮ້ອຍ ແລະ ຈົບຊັ້ນປະຖົມລົງມາ ກວມເອົາ 5,80 ສ່ວນຮ້ອຍ; ອາຊີບຄ້າຂາຍ ກວມເອົາ 60,4 ສ່ວນຮ້ອຍ, ຮອງລົງມາແມ່ນຮັບຈ້າງ ກວມເອົາ 17,0 ສ່ວນຮ້ອຍ, ອາ ຊີບອື່ນໆ ກວມເອົາ 11,3 ສ່ວນຮ້ອຍ, ພະນັກງານ-ລັດຖະ ກອນ ກວມເອົາ 6,9 ສ່ວນຮ້ອຍ, ກະສິກໍາ ກວມເອົາ 4,4ສ່ວນຮ້ອຍ, ລາຍໄດ້ສະເລ່ຍ ລະຫວ່າງ 1.500.000-3.000.000 ກີບ ກວມເອົາ 62,09 ສ່ວນຮ້ອຍ, ຮອງລົງມາແມ່ນຜູ້ທີ່ລາຍໄດ້ລະຫວ່າງ 3.000.001-4.500.000 ກີບ ກວມເອົາ 26,65 ສ່ວນຮ້ອຍ, ຜູ້ທີ່ມີລາຍໄດ້ 4.000.001-6.000.000 ກີບ ກວມເອົາ 9,34 ສ່ວນຮ້ອຍ, ຜູ້ທີ່ມີລາຍໄດ້ 6.000.001 ຂຶ້ນໄປ ກວມເອົາ 1,92 ສ່ວນຮ້ອຍ;

**5. ວິພາກຜົນ**

**1)** ຈາກຜົນຂອງການຄົ້ນຄວ້າວິໄຈໃນຄັ້ງນີ້ພົບວ່າ: ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມ ແມ່ນຢູ່ໃນລະດັບປານກາງທັງໝົດ ແລະ ເປັນໄປຕາມແນວທາງການມີສ່ວນຮ່ວມຂອງປະຊາ ຊົນ ໃນການພັດທະນາຊຸມຊົນ ເຊິ່ງສອດຄ່ອງກັບການສຶກສາຄົ້ນຄວ້າ ກ່ຽວກັບ "ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຊຸມຊົນ ໃນເຂດເທດສະບານເມືອງສະແກ້ວ ຈັງຫວັດສະແກ້ວ (ພຣະ ທະວັດໄຊ ສິນຕິທໍາໂມ, 2018), ເມື່ອພິຈາ ລະນາໃນແຕ່ລະດ້ານ ກໍເຫັນວ່າ ຢູ່ໃນລະດັບປານກາງທັງໝົດເຊັ່ນດຽວກັນ ເຊິ່ງສອດຄ່ອງກັບຜົນການຄົ້ນ ຄວ້າ ກ່ຽວກັບ: ການມີສ່ວນຮ່ວມໃນການພັດທະນາຊຸມຊົນ ໃນເຂດດູສິດ ກຸງເທບມະຫານະຄອນ (ລັດຖະພົງ ບຸນຍານຸວັດ, 2009). ນອກຈາກນັ້ນ ຜົນການວິເຄາະການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ໃນແຕ່ລະດ້ານ ຍັງສະແດງອອກດັ່ງນີ້:

**2) ດ້ານການມີສ່ວນຮ່ວມໃນການຕັດສິນໃຈ:** ຜົນການຄົ້ນຄວ້າພົບວ່າ: ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ດ້ານການມີສ່ວນຮ່ວມໃນການຕັດສິນໃຈ ຢູ່ໃນລະດັບປານກາງ ເນື່ອງຈາກວ່າປະຊາຊົນໄດ້ເຂົ້າຮ່ວມປະຊຸມກັບ ອົງການປົກຄອງນະຄອນ ເພື່ອສະເໜີ

ບັນຫາຄວາມຕ້ອງການຂອງຊຸມຊົນ ຈັດກິດຈະກຳຂອງກຸ່ມຕ່າງໆ ໃນການພັດທະນາຕົວເມືອງ, ແຕ່ຍັງມີປະຊາຊົນບາງສ່ວນ ທີ່ບໍ່ໄດ້ເປັນເຊັ່ນນັ້ນ ເຊິ່ງບໍ່ສອດຄ່ອງກັບງານວິໄຈຂອງ ກິດຕິໄຊ ສິນຄົງ ໄດ້ສຶກສາວິໄຈເລື່ອງ “ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຍຸດທະສາດ ຂອງອົງການບໍລິ ຫານສ່ວນຕຳບົນທ່າໂພ ອຳເພີເມືອງ ຈັງຫວັດພິດສະນຸໂລກ” ພົບວ່າ: ປະຊາຊົນໃນການພັດທະນາຍຸດທະສາດ ດ້ານການມີສ່ວນຮ່ວມຕັດສິນໃຈ ຢູ່ໃນລະດັບໜ້ອຍ.

**3) ດ້ານການມີສ່ວນຮ່ວມໃນການດຳເນີນງານ:** ຜົນການຄົ້ນຄວ້າພົບວ່າ: “ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ” ພົບວ່າ ດ້ານການມີສ່ວນຮ່ວມໃນການດຳເນີນງານ ຢູ່ໃນລະດັບປານກາງ ເນື່ອງຈາກປະຊາຊົນມີສ່ວນຮ່ວມກັບອົງການປົກຄອງນະຄອນ ໃນການດຳເນີນງານໂຄງການ ຕາມແຜນພັດທະນາຕົວເມືອງ, ແຕ່ຍັງມີປະ ຊາຊົນຈຳນວນໜຶ່ງ ບໍ່ໄດ້ເປັນເຊັ່ນນັ້ນ ເຊິ່ງສອດຄ່ອງກັບງານວິໄຈຂອງ ປະທິຕາ ປານເນດແກ້ວ ໄດ້ສຶກສາຄົ້ນຄວ້າເລື່ອງ “ການມີສ່ວນຮ່ວມຂອງປະຊາຊົນ ຕໍ່ການບໍລິຫານພັດທະ ນາທ້ອງຖິ່ນຂອງອົງການບໍລິຫານສ່ວນຕຳບົນສອນຫລວງ ອຳເພີອຳພະວາ ຈັງຫວັດສະໝຸດສົງຄາມ” ພົບວ່າ ການມີສ່ວນຮ່ວມໃນການພັດທະນາທ້ອງຖິ່ນ ຂອງອົງການບໍລິຫານສ່ວນຕຳບົນ ດ້ານການດຳເນີນງານ ຢູ່ໃນລະດັບປານກາງ.

**4) ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ:** ຜົນການຄົ້ນຄວ້າພົບວ່າ: “ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ” ພົບວ່າ ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ຢູ່ໃນລະດັບປານກາງ ເນື່ອງຈາກປະ ຊາຊົນມີຄວາມຍິນດີ ແລະ ພາກພູມໃຈ ເມື່ອໂຄງການຕ່າງໆ ກໍ່ໃຫ້ເກີດຜົນປະໂຫຍດຕໍ່ຕົນເອງ ແລະ ຕົວເມືອງ, ແຕ່ຍັງມີປະຊາຊົນຈຳນວນໜຶ່ງ ບໍ່ໄດ້ເປັນເຊັ່ນນັ້ນ ເຊິ່ງສອດ ຄ່ອງກັບງານວິໄຈຂອງ ພັດສຸຣີ ຄູນກາງ ໄດ້ສຶກສາຄົ້ນຄວ້າເລື່ອງ “ປັດໄຈທີ່ມີຄວາມສຳພັນກັບ ການມີສ່ວນຮ່ວມຂອງຄະນະກຳມະການຊຸມຊົນ ໃນການພັດທະນາເມືອງໜ້າຢູ່ຢ່າງຍືນຍົງ ເທດສະບານນະຄອນຂອນແກ່ນ ຈັງຫວັດຂອນແກ່ນ” ພົບວ່າ ການມີສ່ວນຮ່ວມຂອງຄະນະກຳມະການຊຸມຊົນ ໄດ້ແກ່ ການຮັບຜົນປະໂຫຍດ ໃນການພັດທະນາເມືອງໜ້າຢູ່ຢ່າງຍືນຍົງ ໃນພາບລວມພົບວ່າ ຢູ່ໃນລະດັບປານກາງ.

**5) ດ້ານການມີສ່ວນຮ່ວມໃນການປະເມີນຜົນ:** ຜົນການຄົ້ນຄວ້າພົບວ່າ: “ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈຳປາສັກ” ພົບວ່າ ດ້ານການມີສ່ວນຮ່ວມໃນການປະເມີນຜົນ ຢູ່ໃນລະດັບປານກາງ ເນື່ອງຈາກປະຊາຊົນມີສ່ວນຮ່ວມໃນການດຳເນີນໂຄງການ/ກິດຈະກຳ ຂອງອົງ ການປົກຄອງນະຄອນ ມີການປະເມີນຜົນຄວາມຄຸ້ມຄ່າຂອງແຜນ ຈາກງົບປະມານທີ່ໃຊ້ ເຊິ່ງສອດຄ່ອງກັບງານວິໄຈຂອງ ພານີ ຮຽງທອງ ແລະ ຄະນະ ໄດ້ສຶກສາຄົ້ນຄວ້າເລື່ອງ “ການມີສ່ວນຮ່ວມຂອງປະຊາຊົນຕໍ່ການພັດທະນາອົງການບໍລິຫານສ່ວນຕຳບົນບາງເຕີຍ ອຳເພີສາມພານ ຈັງຫວັດນະ ຄອນປະຖົມ” ພົບວ່າ ການມີສ່ວນຮ່ວມຂອງປະຊາຊົນ ຕໍ່ການພັດທະນາອົງການບໍລິຫານສ່ວນຕຳບົນບາງເຕີຍ ເມື່ອພິຈາລະນາດ້ານການປະເມີນ ຢູ່ໃນລະດັບປານກາງ.

## 6. ສະຫຼຸບຜົນ

- ຜ່ານການຄົ້ນຄວ້າກ່ຽວກັບ ການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ມີຈຸດປະສົງ ເພື່ອສຶກສາກ່ຽວກັບສະພາບການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ແລະ ເພື່ອປຽບ ທຽບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ໂດຍຈໍາແນກຕາມປັດໄຈສ່ວນບຸກຄົນ ຄື: ເພດ, ອາ ຍຸ, ລະດັບການສຶກສາ, ອາຊີບ ແລະ ລາຍໄດ້, ໂດຍການນໍາເອົາແບບສອບຖາມ ທີ່ລວບລວມໄດ້ຈາກກຸ່ມຕົວຢ່າງຈໍານວນທັງໝົດ 364 ຊຸດ ເພື່ອມາຄົ້ນຄວ້າວິໄຈ ດ້ວຍໂປຣແກຣມສໍາເລັດຮູບທາງສະຖິຕິ, ເຊິ່ງສາມາດຜົນການຄົ້ນ ຄວ້າສາມາດສັງລວມໄດ້ດັ່ງນີ້:

**ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ.**

ຜູ້ຕອບແບບສອບຖາມສ່ວນໃຫຍ່ ແມ່ນເພດຊາຍ, ອາຍຸ 41-45 ປີ, ລະດັບການສຶກສາຈົບຊັ້ນກາງ, ມີອາຊີບຄ້າຂາຍ ແລະ ລາຍໄດ້ຢູ່ລະຫວ່າງ 1.500.000-3.000.000 ກີບ/ເດືອນ.

**+ ຂໍ້ມູນລະດັບການມີສ່ວນຮ່ວມ ຂອງປະຊາຊົນໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ.**

ຜົນການຄົ້ນຄວ້າຂໍ້ມູນ ລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ລວມທັງໝົດຈໍານວນ 04 ດ້ານ ຄື: ການມີສ່ວນຮ່ວມໃນການຕັດສິນໃຈ, ການມີສ່ວນຮ່ວມໃນການດໍາເນີນງານ, ການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ແລະ ການມີສ່ວນຮ່ວມໃນການປະເມີນຜົນ ໂດຍພາບລວມ ແມ່ນຢູ່ໃນລະດັບປານກາງ ( $\bar{X}$=3.44, S.D=0.81).

**+ ຜົນການທົດສອບສົມມຸດຖານ ເພື່ອປຽບທຽບລະດັບການມີສ່ວນຮ່ວມ ຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ຈໍາແນກຕາມປັດໄຈສ່ວນບຸກຄົນ ສະຫຼຸບໄດ້ດັ່ງນີ້:**

- ສົມມຸດຖານທີ 1: ປະຊາຊົນທີ່ມີເພດຕ່າງກັນ ການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມບໍ່ແຕກຕ່າງກັນ (Sig=0.668), ດັ່ງນັ້ນ ຈຶ່ງປະຕິເສດສົມມຸດຖານ.
- ສົມມຸດຖານທີ 2: ປະຊາຊົນທີ່ມີອາຍຸຕ່າງກັນ ການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມບໍ່ແຕກຕ່າງກັນ (Sig=0.036), ດັ່ງນັ້ນ ຈຶ່ງປະຕິເສດສົມມຸດຖານ.
- ສົມມຸດຖານທີ 3: ປະຊາຊົນທີ່ມີລະດັບການສຶກສາຕ່າງກັນ ການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ໃນເຂດເທດສະບານນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມບໍ່ແຕກຕ່າງກັນ (Sig=0.261), ດັ່ງນັ້ນ ຈຶ່ງປະຕິ ເສດສົມມຸດຖານ.
- ສົມມຸດຖານທີ 4: ປະຊາຊົນທີ່ມີອາຊີບຕ່າງກັນ ການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມບໍ່ແຕກຕ່າງກັນ (Sig=0.102), ດັ່ງນັ້ນ ຈຶ່ງປະຕິເສດສົມມຸດຖານ.
- ສົມມຸດຖານທີ 5: ປະຊາຊົນທີ່ມີລາຍໄດ້ຕ່າງກັນ ການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ໃນເຂດເທດສະ ບານນະຄອນປາກເຊ ແຂວງຈໍາປາສັກ ໂດຍພາບລວມບໍ່ແຕກຕ່າງກັນ (Sig=0.000), ດັ່ງນັ້ນ ຈຶ່ງປະຕິເສດສົມມຸດຖານ.

**+ ຂໍ້ຈໍາກັດໃນການສຶກສາ.**

ໃນການສຶກສາກ່ຽວກັບ ການມີສ່ວນຮ່ວມໃນການພັດທະນາຕົວເມືອງ ໃນເຂດເທດສະບານ ນະຄອນປາກເຊ ແຂວງຈໍາປາສັກ ໄດ້ພົບເຫັນບາງບັນຫາທີ່ເປັນຂໍ້ຈໍາກັດ ແລະ ຂໍ້ຫຍຸ້ງຍາກ ເປັນຕົ້ນ

ແມ່ນບັນຫາການຕອບສະໜອງຂໍ້ມູນ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເນື່ອງຈາກວ່າກຸ່ມຕົວຢ່າງເປົ້າໝາຍລ້ວນແຕ່ມີອາຊີບຄ້າຂາຍ ເຊິ່ງເຂົາເຈົ້າມີເວລາຈຳກັດໃນການຕອບແບບສອບຖາມ, ໃນການຄົ້ນຄວ້າວິໄຈຄັ້ງນີ້ ແມ່ນໄດ້ລົງເລິກໃສ່ການວິໄຈແບບປະລິມານ.

**+ ຂໍ້ແນະນຳ.**

**- ຂໍ້ສະເໜີຕໍ່ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ:**ຄວນມີການໂຄສະນາເຜີຍແຜ່ ທາງດ້ານຂໍ້ມູນຂ່າວສານ ກ່ຽວກັບວຽກງານການພັດທະນາຕົວເມືອງ ເພື່ອໃຫ້ປະຊາ ຊົນຮັບຮູ້ ເຂົ້າໃຈຫລາຍຂຶ້ນ, ຕິດພັນກັບການຍົກສູງບົດ ບາດຂອງປະຊາຊົນ ໄດ້ເຂົ້າໄປມີສ່ວນຮ່ວມໃນດ້ານຕ່າງໆ ເພື່ອເຮັດໃຫ້ວຽກງານພັດທະນາຕົວເມືອງ ມີປະສິດທິພາບ ແລະ ປະສິດທິຜົນດີ; ຄວນເປີດໂອກາດໃຫ້ປະຊາຊົນ ມີສ່ວນຮ່ວມໃນການບໍລິຫານຫລາຍຂຶ້ນ ຫລື ຄວນມີການນຳເອົາຄວາມຄິດຄວາມເຫັນຂອງປະຊາຊົນ ມາໝູນໃຊ້ໃຫ້ມີການພັດທະນາຕົວຈິງ; ການບໍລິຫານ ຫລື ຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງຄວນໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ເພື່ອເຮັດໃຫ້ປະຊາຊົນມີຄວາມຮູ້ສຶກວ່າ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເປັນກົນໄກໜຶ່ງໃນການພັດທະນາຕົວເມືອງຮ່ວມກັບປະຊາຊົນ; ສົ່ງເສີມ ແລະ ສະໜັບສະໜູນອົງການປົກຄອງຂັ້ນກຸ່ມ, ຂັ້ນບ້ານ ແລະ ປະຊາຊົນທົ່ວໄປ ໃຫ້ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ, ໜ້າທີ່, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກັບການພັດທະນາຕົວເມືອງ ແລະ ເຂົ້າມາມີບົດບາດໃນການພັດທະນາທ້ອງຖິ່ນ.

**- ຂໍ້ສະເໜີເພື່ອການສຶກສາຄົ້ນຄວ້າຄັ້ງຕໍ່ໄປ:** ຄວນສຶກສາຄົ້ນຄວ້າດ້ານການສົ່ງເສີມໃຫ້ປະຊາຊົນໄດ້ຮັບຮູ້ເຂົ້າໃຈເຖິງ ການມີສ່ວນຮ່ວມ ໂດຍບໍ່ປ່ອຍໃຫ້ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ແກ້ໄຂບັນຫາຢູ່ຝ່າຍດຽວ ໂດຍປະຊາ ຊົນບໍ່ໄດ້ໃຫ້ຄວາມສົນໃຈ; ຄວນເຮັດການສຶກສາຄົ້ນຄວ້າ ທີ່ກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາຕົວເມືອງ ໃນເຂດພື້ນທີ່ການສຶກສາໃຫ້ກວ້າງກວ່ານີ້ ເປັນຕົ້ນ: ອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ; ຂໍ້ສະເໜີແນະຕໍ່ຜູ້ທີ່ຈະສຶກສາຫົວຂໍ້ທີ່ກ່ຽວຂ້ອງ ໃນຄັ້ງຕໍ່ໄປ ຄວນເອົາໃຈໃສ່ໃນການວາງແຜນທີ່ດີໃນການຂຽນບົດຈົບຊັ້ນ ໂດຍສະເພາະການລົງເກັບກຳຂໍ້ມູນ ຖ້າຫາກໃຊ້ແບບສອບຖາມ ຍິ່ງຕ້ອງມີການພົວພັນໃກ້ຊິດຕິດ ແທດ ສົນທະ ນາກັບຜູ້ສະໜອງຂໍ້ມູນ ໃນລັກສະນະແບບເປັນກຸ່ມ ໂດຍມີການວາງແຜນຢ່າງເປັນລະບົບຄົບຊຸດ.

## 7. ຄວາມຮູ້ບຸນຄຸນ

ຂ້າພະເຈົ້າ ນັກສຶກສາປະລິນຍາໂທເສດຖະສາດ ສາ ຂາການພັດທະນາຊຸມຊົນແບບຍືນຍົງ ຣຸ່ນທີ I ສົກສຶກສາ 2023-2024, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະ ຫາວິທະຍາໄລຈຳປາສັກ ຂໍຖືເປັນກຽດຢ່າງສູງ ຂໍສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອ ມາຍັງຄະນະນຳ ແລະ ບັນດາທ່ານຄູອາຈານຂອງມະຫາວິທະຍາ ໄລຈຳປາສັກ ໂດຍສະເພາະແມ່ນ ປອ. ແສງສຸລິຍາ ຈັນທະນາຄອນ ໃນນາມອາຈານທີ່ປຶກສາ ພ້ອມດ້ວຍ ປທ. ວອນວະໄລ ອິນບຸນມີ ແລະ ປທ. ໜູໄກ ສີຫາເທບ ຜູ້ຊ່ວຍອາຈານທີ່ປຶກສາ ທີ່ໄດ້ເອົາ ໃຈໃສ່ຊີ້ນຳ, ແນະນຳ, ໃຫ້ຄຳປຶກສາທາງດ້ານວິຊາການ ແລະ ການກວດແກ້ບົດ ຕະຫຼອດໄລຍະເວລາການຄົ້ນຄວ້າ ຂຽນວິທະຍານິພົນໃນຄັ້ງນີ້ ຈົນໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ຂໍສະແດງຄວາມຂອບໃຈ ອົງການປົກຄອງນະ ຄອນປາກເຊ ໂດຍສະເພາະແມ່ນຫ້ອງວ່າການນະຄອນພ້ອມດ້ວຍອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ 03 ບ້ານ ທີ່ໄດ້ເອື້ອອຳນວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອ, ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຂ່າວສານ ໃນການຂຽນບົດວິທະຍານິພົນ ຈົນໄດ້ຮັບຜົນ ສຳເລັດ, ຂໍສະແດງຄຳຂອບໃຈ ມາຍັງຄອບຄົວ ແລະ ບັນດາໝູ່ເພື່ອນທີ່ຊ່ວຍເປັນກຳລັງໃຈ ແລະ ໃຫ້ການສະໜັບສະໜູນດ້ານຕ່າງໆຕະຫຼອດມາ. ທ້າຍສຸດນີ້, ຂ້າພະເຈົ້າຂໍ

ອວຍ ພອນໄຊອັນປະເສີດ ມາຍັງບັນດາທ່ານທຸກ ພາກສ່ວນ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບ ຜົນສຳເລັດ ໃນທຸກໆໜ້າທີ່ວຽກງານຕະຫຼອດໄປ.

## 8. ເອກະສານອ້າງອີງ


ກຽດຂະຈອນ ວັດຈະນະສະຫວັດ ,ການມີສ່ວນ ຮ່ວມຂອງປະຊາຊົນຕໍ່ການດຳເນີນ ນະໂຍບາຍຂອງລັດຖະບານ ດ້ານການ ບໍລິການຈັດຫາງານ) ກອງແຜນງານ ແລະ ສາລະສົນ ເທດ ກົມການຈັດຫາງານ ກະຊວງ ແຮງງານໄທ ,(ໜ້າ.1

ແຂວງຈຳປາສັກ ,ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການ ຄຸ້ມຄອງ ແລະ ຈັດສັນຄວາມເປັນ ລະບຽບຮຽບຮ້ອຍ ໃນຕົວເມືອງປາກເຊ ແຂວງຈຳປາສັກ.2017 ,

ເຄືອວັນ ສືບອ້າຍ ,"ການມີສ່ວນຮ່ວມຂອງ ປະຊາຊົນ ໃນການພັດທະນາທ້ອງຖິ່ນ : ກໍລະນີສຶກສາອົງການບໍລິຫານສ່ວນຕຳບົນໜ ອງແຝກ ອຳເພີສາລະພີ ຈັງຫວັດຊຽງໃໝ່", ບົດປະກອບວິທະຍານິພົນ ສິລະປະສາດ ປະລິນຍາໂທ (ມະ ຫາວິທະຍາໄລ ມະຫາ ມຸງກຸດຣາຊະວິທະຍາໄລ, 2007).

ນະຄອນປາກເຊ ,ບົດສະຫລຸບຫ້ອງການພາຍໃນ ນະຄອນ ປີ.2022

ສະພາແຫ່ງຊາດ (2015) ,ກົດໝາຍວ່າດ້ວຍການ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ.

ສຳນັກງານຄະນະກຳມະການ ກອງທຶນໝູ່ບ້ານ ແລະ ຊຸມຊົນເມືອງ ແຫ່ງຊາດ ,ສຳນັກງານ ສະພາສະຖາບັນຣາຊະພັດແລະ ທະບວງ ວິທະຍາໄລ ,2547 ,ໜ້າ.114

ເສີມພົງ ຢູ່ໂຕ, "ການມີສ່ວນຮ່ວມໃນການພັດທະນາ ຊຸມຊົນ ຂອງປະຊາຊົນໃນເຂດບາງຄໍແຫຼມ ກຸງເທບມະຫານະຄອນ", ປະລິນຍາໂທ ບໍລິຫານລັດບໍລິຫານທົ່ວໄປ (ຈົບການສຶກສາ :ມະຫາວິທະຍາໄລຣາຊະພັດສວນສຸນັນທາ, 2008).

ສຸພະໄຊ ຕຣີທົດ, "ການມີສ່ວນຮ່ວມຂອງຄະນະ ກຳມາທິການຊຸມຊົນ ໃນການວາງແຜນ ພັດທະນາເທດ ສະບານ ເມືອງຊົນບູລີ", ຫຼັກສູດປະລິນຍາໂທ ພາກວິຊານະໂຍບາຍ ສາທາລະນະ, (ພາກວິຊາ :ມະຫາວິທະຍາໄລ ບູລະພາ, 2004).

ສິດທິສານ ຊັບສິຣິໂສພາ ,"ການມີສ່ວນຮ່ວມຂອງ ປະຊາ ຊົນ ໃນການຄຸ້ມຄອງສິ່ງເສດເຫຼືອ : ກໍລະນີສຶກສາຂອງການຄຸ້ມຄອງສິ່ງເສດເຫຼືອ ຂອງເທດສະບານຕຳບົນທ່າບໍ່ ອຳເພີທ່າບໍ່ ຈັງຫວັດໜອງຄາຍ", ວິທະຍານິພົນປະລິນ ຍາເອກ, ມະ ຫາວິທະຍາໄລມະຫິດົນ, 2001).

ນາຍົກລັດຖະມົນຕີ ,ດຳລັດ ວ່າດ້ວຍການສ້າງຕັ້ງ ນະຄອນປາກເຊ ,ປີ.2018

ດວງພອນ ແສງທອງ, "ການມີສ່ວນຮ່ວມຂອງ ປະຊາຊົນ ໃນການກະກຽມແຜນພັດທະນາ ທ້ອງຖິ່ນ ຂອງອົງການບໍລິ ຫານສ່ວນຕຳບົນ ໃນອຳເພີໂພທາຣາມ ຈັງຫວັດຣາຊະບູຣີ", ບົດປະພັນປະລິນຍາໂທປະລິນຍາຕີ ບໍລິຫານ ທົ່ວໄປ (ຈົບການສຶກສາ : ມະຫາວິທະຍາໄລຣາຊະພັດສວນສຸນັນທາ, 2007).

ທະນາວິດ ກາງການ ,"ການມີສ່ວນຮ່ວມຂອງຄະນະ ກຳມະ ການຊຸມຊົນ ໃນການພັດທະນາຊຸມຊົນ ໃນເທດສະ ບານສຳໂລງໃຕ້ ອຳເພີພະປະແດງ ຈັງຫວັດສະໝຸດປະການ", ບົດປະພັນປະລິນ ຍາໂທ ວິທະຍາສາດສັງຄົມເພື່ອການ ພັດທະນາ, (ໂຄງການສຶກສາຈົບປະລິນຍາຕີ : ສະຖາບັນຣາຊະພັດທົນບູລີ, 2003).

ນິຣັນ ຈິງວຸດທິເວດ ,ແນວຄິດແນວທາງການ ພັດທະນາຊຸມຊົນ) ກຸງເທບມະຫານະຄອນ , ສຳນັກງານປະຫຼັດກະຊວງມະ ຫາດໄທ , ,(2007ໜ້າ.25

ນັດນະຣີ ສີທອງ ,ການເພີ່ມສັກກະຍະພາບ ພາວະ ຄວາມເປັນຜູ້ນຳໃນງານພັດທະນາຊຸມຊົນ , .2009

ບົວອອນສັກ ອຸວັນໂຍ ,ການມີສ່ວນຮ່ວມຂອງ ປະຊາຊົນ ໃນຂະບວນການນະໂຍບາຍ ສາທາລະນະ ພິມຄັ້ງທີ ,2 ໜ້າ.16

ບົດສະຫຼຸບຂອງຫ້ອງການຄຸ້ມຄອງ ແລະ ບໍລິການສາ ທາ ລະນະ ນະຄອນປາກເຊ ,ປະຈຳປີ .2022

ບົດລາຍງານການສ້າງ ບ້ານໂພນໄຊ ເປັນບ້ານ ພັດທະນາປະ ຊາຊົນຢູ່ດີກິນດີ ,ປີ.2023

ປຣັຊຍາ ເວສາຣັດ ,ການມີສ່ວນຮ່ວມຂອງ ປະຊາຊົນ ໃນກິດຈະກຳເພື່ອພັດທະນາ ຊົນນະບົດ ,ໜ້າ.5-3

ປີຍະ ປະທີບລັກມະນີ ,"ການມີສ່ວນຮ່ວມຂອງ ປະຊາຊົນ ໃນການພັດທະນາຊຸມຊົນ ໃນພື້ນ ທີ່ເຂດແຄມທະເລບາງຂຸນທຽນ ກຸງເທບ ມະຫານະຄອນ", ປະລິນຍາໂທສິລະ ປະສາດ ສາຂາວິຊາສັງຄົມວິທະຍາປະຍຸກ ພາກວິຊາສັງຄົມ ແລະ ມະນຸດວິທະຍາ, (ຈົບ ການສຶກສາ :ມະຫາວິທະຍາໄລກະ ເສດສາດ , 2003).

ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນປາກ ເຊ 5 ປີ.(2025-2021)

ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນປາກເຊ ,ປີ.2021

ແຜນຈັດຕັ້ງປະຕິບັດ ໂຄງການພັດທະນາຕົວເມືອງ ສີຂຽວ ນະຄອນປາກເຊ.(2030-2022)

ພຣະມະຫາປະກາສິດ ສິລິເມໂທ (ທີຕິປະສິດທິ ກອນ), "ການມີສ່ວນຮ່ວມຂອງປະຊາຊົນໃນ ການພັດທະນາບ້ານເສດຖະກິດພຽງພໍຊຸມ ຊົນບ້ານຄອງໃໝ່ ອຳເພີສາມພານ ຈັງ ຫວັດ ນະຄອນປະຖົມ, ປະລິນຍາໂທສາຂາການ ພັດທະນາສັງຄົມ(ຈົບປະລິນຍາຕີ: ມະຫາວິທະຍາໄລມະຫາຈຸລາລົງກອນ ຣາຊະ ວິທະຍາໄລ, 2013).

ພວງທອງ ໂຍທາໃຫຍ່ "ການມີສ່ວນຮ່ວມຂອງ ປະຊາຊົນ ໃນການກະກຽມແຜນພັດທະນາ ທ້ອງຖິ່ນ: ກໍລະນີສຶກສາ ຂອງອົງການ ບໍລິຫານສ່ວນຕຳບົນ ໃນຈັງຫວັດຊຽງໃໝ່", ປະລິນຍາໂທສິລະປະສາດ, (ໂຮງຮຽນຈົບ ການສຶກສາ: ມະ ຫາວິທະຍາໄລຊຽງໃໝ່, 2002).

ໄພຊົນ ຕັນອຸດ ,ການມີສ່ວນຮ່ວມຂອງຜູ້ນຳ ແລະ ປະຊາຊົນ ໃນການພັດທະນາຊຸມຊົນເຂັ້ມແຂງ ເມືອງໜ້າຢູ່ :ກໍລະນີສຶກສາ ເທດສະບານເມືອງ ເມືອງແກນພັດທະນາ ອຳເພີແມ່ແຕງ ຈັງຫວັດ ຊຽງໃໝ່, ປະລິນຍາໂທວິທະຍາສາດ ການເມືອງ ສາຂາວິຊາການເມືອງ ແລະ ການ ປົກຄອງ, (ຈົບການສຶກສາ :ມະຫາ ວິທະຍາໄລ ຊຽງໃໝ່, 2009).

ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ /03ກມສພ ,ລົງວັນທີ 15 ກຸມພາ 2012 ວ່າ ດ້ວຍສ້າງແຂວງເປັນຫົວໜ່ວຍຍຸດທະສາດ , ສ້າງເມືອງເປັນຫົວໜ່ວຍເຂັ້ມ ແຂງຮອບດ້ານ ,ສ້າງບ້ານເປັນຫົວໜ່ວຍພັດທະນາ.

ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະ ພັກແຂວງຈຳປາສັກ .(2025-2021)

ວິໃສທັດ ຂອງນະຄອນປາກເຊ.(2030-2022)

ອຸໄຣວັນ ແຈ່ມໃສ ,"ການມີສ່ວນຮ່ວມຂອງ ປະຊາຊົນໃນການກະກຽມ ແຜນການຂອງ ອົງການບໍລິຫານສ່ວນ ຕຳບົນວັງຫວ້າ ອຳເພີ ແກລງ ຈັງຫວັດລະຍອງ", ປະລິນຍາໂທສິ ລະປະສາດ ,ໂຄງການພັດທະນາຊຸມຊົນ (ຈົບ ການສຶກສາ :ມະຫາວິທະຍາໄລບູລະພາ, 2005).

Cohen John M. & Uphoff. Norman T.Participation's Place in Rural Development. Seeking Clarity

Through Specificity. World Development, 1980.

.__________Norman T. Rural Development participation: Concepts and measures for Project Design. Implementation and Evaluation. In Rural Development monograph. 2 The Rural Development Committee for International Studies. Cornell University. January, 1997.

Jacques Steinberg. Dr. Luther H. GU lick. Adviser to Roosevelt and Mayors. New York: Retrieved May 9, 2010.

Olsen. Jame A. Urban Sociology. New York: Holt. Rine Hart and Winson, 1968.

Poplin. Dennis. Communities : A Surway of Theories and Methods of Research. New York: Mac Millan, 1972.

Sanders. Irwin T. Theories of community Development. Rural Sociology, 1958.

White. Alastair T. Why Community Participation. A Discussion of the Argument go. Community Participation: Current Issue and Lesson Learned. n.p. United Nations Children's Fun, 1982.

Yamane. T. Statistic: An Introductory Analysis. 3rd ed. Time Printers Sdn. Bnd. Singapore, 1973

.